ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ໄອຍະການ-ສານປະຊາຊົນເຜີຍແຜ່ ວຽກງານຕ້ານການຟອກເງິນ




ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດໄດ້ຈັດຕັ້ງການເຜີຍແຜ່ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ແລະ ບັນດານິຕິກຳທີ່ຕິດພັນ ໃນວັນທີ 1 ທັນວາ 2020 ທີ່ ຫ້ອງປະຊຸມອົງການໄອຍະການສູງສຸດ. ໂດຍການໃຫ້ກຽດເປັນປະທານຮ່ວມຂອງທ່ານ ບຸນຍັງ ຈັນດາລາສານ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ທ່ານ ຄຳພັນ ບຸນພາຄົມ ຮອງປະທານສານປະຊາຊົນສູງສຸດ; ພ້ອມນີ້, ກໍ່ມີບັນດາພະນັກງານຂັ້ນນຳ ແລະ ວິຊາການຂອງ 2 ພາກສ່ວນ ແລະ ມີນັກວິທະຍາກອນຈາກສຳນັກງານຂໍ້ມູນຕ້ານການຟອກເງິນ ເຂົ້າຮ່ວມ.

ການເຜີຍແຜ່ໃນຄັ້ງນີ້ ເພື່ອເຮັດໃຫ້ບັນດາຄະນະນຳ ແລະ ພະນັກງານຂອງອົງການໄອຍະການປະຊາຊົນສູງສຸດຊຶ່ງເປັນອົງການລັດທີ່ເຮັດໜ້າທີ່ຕິດຕາມ, ກວດກາການເຄົາລົບ ແລະ ປະຕິບັດໜ້າທີ່ກົດໝາຍໃນຂອບເຂດທົ່ວປະເທດ ແລະ ສັ່ງຟ້ອງຜູ້ຕ້ອງຫາຂຶ້ນສານຕາມກົດໝາຍ ແລະ ສານປະຊາຊົນສູງສຸດແມ່ນອົງການຕຸລາການທີ່ເຮັດໜ້າທີ່ພິຈາລະນາ ແລະ ຕັດສິນຄະດີຢູ່ ສປປ ລາວ ມີແຕ່ສານເທົ່ານັ້ນຈຶ່ງມີສິດອຳນາດພິຈາລະນາຕັດສິນ, ພິຈາລະນາຄະດີບົນພື້ນຖານຫຼັກຖານ, ການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດໃນນີ້ລວມທັງບັນດາລະບຽບການກໍ່ຄືຄຳສັ່ງແນະນຳວ່າດ້ວຍການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໄດ້ຮັບຮອງໃນຕົ້ນປີນີ້ ໂດຍ 2 ອົງການຊຶ່ງໃນນາມເປັນອົງການຕິດຕາມກວດກາການເຄົາລົບ ແລະ ປະຕິບັດໜ້າທີ່ກົດໝາຍດ້ວຍຄວາມເຂົ້າໃຈຢ່າງເລິກເຊິ່ງ, ເພື່ອໃຫ້ສາມາດນຳໄປຈັດຕັ້ງປະຕິບັດຕົວຈິງໄດ້ຢ່າງເໝາະສົມ ແລະ ມີປະສິດທິພາບສູງ.

ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍເປັນວຽກງານທີ່ມີຄວາມສຳຄັນຕໍ່ສະພາບການດຳເນີນເສດຖະກິດໃນປະເທດ; ສປປ ລາວ ກໍ່ຄືລັດຖະບານເຮົາ ໄດ້ໃຫ້ຄວາມສຳຄັນໃນວຽກງານດັ່ງກ່າວ ໂດຍໄດ້ສ້າງຕັ້ງຄະນະກຳມະການລະດັບຊາດຂຶ້ນ ໂດຍປະກອບມີຮອງນາຍົກລັດຖະມົນຕີ ເປັນປະທານ; ບັນດາລັດຖະມົນຕີ-ຮອງລັດຖະມົນຕີຈາກ 13 ກະຊວງ/ທຽບເທົ່າເຂົ້າຮ່ວມໃນຄະນະ ແນໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວບົນພື້ນຖານເງື່ອນໄຂ 40 ຂໍ້ແນະນຳຂອງສາກົນທີ່ ສປປ ລາວ ເປັນພາຄີ. ໃນຜ່ານມາ ສປປ ລາວ ໄດ້ຮັບການປະເມີນຜົນຮອບດ້ານຄັ້ງທຳອິດ ໃນປີ 2010 ຊຶ່ງຜົນການປະເມີນໃນຄັ້ງນັ້ນແມ່ນຕົກຢູ່ໃນບັນຊີເທົາ ເຮັດໃຫ້ ສປປ ລາວພົບຄວາມຫຍຸ້ງຍາກຫຼາຍດ້ານ. ເຖິງຢ່າງໃດກໍດີ, ສປປ ລາວ ໄດ້ສູ້ຊົນ, ປັບປຸງແກ້ໄຂຂໍ້ຄົງຄ້າງຕ່າງໆໂດຍໄດ້ອອກບັນດານິຕິກຳທີ່ຕິດພັນຈຳນວນ 24 ສະບັບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນໃຫ້ສອດຄ່ອງຕາມມາດຖານສາກົນ, ສ້າງກົນໄກ ແລະ ຂັ້ນຕອນຕ່າງໆ ເພື່ອນຳໄປປະຕິບັດໃຫ້ເກີດປະສິດທິຜົນຕາມນິຕິກຳທີ່ວາງອອກໄດ້ຈຳນວນໜຶ່ງ ຈຶ່ງເຮັດໃຫ້ ສປປ ລາວ ສາມາດອອກຈາກບັນຊີເທົາຂອງສາກົນໃນປີ 2017. ຫຼັງຈາກນັ້ນ, ກໍ່ໄດ້ມີການດຳເນີນການປະເມີນຄວາມສ່ຽງລະດັບຊາດຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍສຳເລັດໃນກາງປີ 2018 ຊຶ່ງສາມາດກຳນົດໄດ້ໄພຂົ່ມຂູ່ຂອງການຟອກເງິນ, ຂະແໜງການທຸລະກິດທີ່ມີຄວາມສ່ຽງຈະຖືກສວຍໃຊ້ໃນຂະບວນການຟອກເງິນ ແລະ ເລັ່ງແກ້ໄຂຂໍ້ຄົງຄ້າງທີ່ໄດ້ຈາກຜົນການປະເມີນ ເພື່ອປັບປຸງປະສິດທິພາບຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງ ແລະ ຮັບປະກັນໄດ້ຕາມມາດຖານສາກົນຍິ່ງຂຶ້ນ.

ເພື່ອກະກຽມການປະເມີນຜົນຮອບດ້ານ ຄັ້ງທີ 2 ໃນສົກປີ 2020-2021, ລັດຖະບານໄດ້ສ້າງຕັ້ງຄະນະສະເພາະກິດຂຶ້ນ ໂດຍມີຮອງນາຍົກລັດຖະມົນຕີ, ລັດຖະມົນຕີ/ຮອງລັດຖະມົນຕີ ຈຳນວນ 25 ທ່ານປະກອບຢູ່ໃນຄະນະກຳມະການ ແລະ ໄດ້ແບ່ງເປັນ 4 ກຸ່ມວຽກຄື: ວຽກງານເຜີຍແຜ່ ແລະ ເຊື່ອມຊຶມ, ວຽກງານນິຕິກຳ ແລະ ກົນໄກ, ວຽກງານຄຸ້ມຄອງ ແລະ ວຽກງານການດຳເນີນຄະດີ. ໃນນັ້ນ, ສຳລັບກຸ່ມວຽກງານເຜີຍແຜ່ ແລະ ເຊື່ອມຊຶມ ລວມມີຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ, ສຳນັກງານນາຍົກລັດຖະມົນຕີ, ກະຊວງການເງິນ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ກົມກອງທີ່ກ່ຽວຂ້ອງປະກອບຢູ່ໃນຄະນະ ຊຶ່ງມີສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນກອງເລຂາທີ່ເຮັດວຽກໃນການປະສານງານ ແລະ ມາຮອດປະຈຸບັນ 4 ກຸ່ມວຽກດັ່ງກ່າວໄດ້ດຳເນີນການຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນຢ່າງເປັນເຈົ້າການດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນຄືບໜ້າດີຂຶ້ນຕາມລຳດັບ.

ສະນັ້ນ, ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວດຳເນີນໄປດ້ວຍຜົນສຳເລັດນັ້ນ ແມ່ນຕ້ອງເລັ່ງທວງໃຫ້ທຸກພາກສ່ວນໃນສັງຄົມ ໂດຍສະເພາະອົງການປົກປ້ອງ ແລະ ນຳໃຊ້ກົດໝາຍ ໃນນີ້ລວມທັງອົງການໄອຍະການປະຊາຊົນແລະສານປະຊາຊົນຕ້ອງໄດ້ເພີ່ມທະວີຄວາມຮັບຜິດຊອບຂອງຕົນໃຫ້ສູງຂຶ້ນກວ່າເກົ່າ ແນໃສ່ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງພົນລະເມືອງກໍ່ຄືການປະຕິບັດພັນທະໜ້າທີ່ຂອງຕົນຕໍ່ສາກົນ ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ